ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 05 /ທຄຕລ 2017

ນະຄອນຫຼວງວຽງຈັນ, ວັນທີ: 12.05.2017

## ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2016
## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2016 (ກອງປະຊຸມ) ຂຶ້ນໃນເວລາ 14:28 ໂມງ ຂອງວັນທີ 28/04/2017 ທີ່ຫ້ອງປະຊຸມໃຫຍ່ຂອງຕະຫຼາດຫຼັກຊັບລາວ, ໂດຍການເປັນປະທານກອງປະຊຸມຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມຈຳນວນ 64 ທ່ານ, ຜູ້ມອບສິດ 133 ທ່ານ (ຮຸ້ນທີ່ໄດ້ຮັບການມອບສິດ 605,687 ຮຸ້ນ), ລວມຈຳນວນຮຸ້ນທີ່ເຂົ້າຮ່ວມກອງປະຊຸມທັງໝົດ 112,620,541 ຮຸ້ນ; ບັນລຸອັດຕາສ່ວນ 82.459% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ຊຶ່ງຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 23,957,059 ຮຸ້ນ ເທົ່າກັບ 17.541% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ຄະນະສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ມີດັ່ງນີ້:

| | | |
|---|---|---|
| 1. | ທ່ານ ປອ.ບຸນເຫຼືອ ສິນໄຊວໍຣະວົງ, | ປະທານສະພາບໍລິຫານ ທຄຕລ, ຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ. |
| 2. | ທ່ານ ຄຳສຸກ ສູນດາລາ, | ຮອງປະທານສະພາບໍລິຫານ ທຄຕລ. |
| 3. | ທ່ານ ພູຂົງ ຈັນທະຈັກ, | ກຳມະການ ສະພາບໍລິຫານ, ຜູ້ອຳນວຍການ ທຄຕລ. |
| 4. | ທ່ານ ພັນຊະນະ ຄູນນຸວົງ | ກຳມະການ ສະພາບໍລິຫານ, ຮອງຜູ້ອຳນວຍການ ທຄຕລ. |
| 5. | ທ່ານ ວຽງໃຊ ຈັນທະວິສຸກ | ກຳມະການ ສະພາບໍລິຫານ, ປະທານກຳມະບານ ຕາງໜ້າພະນັກງານ ທຄຕລ. |
| 6. | ທ່ານ ເດວິດ ແພຣັອດ | ຕາງໜ້າຄູ່ຮ່ວມຍຸດທະສາດ, COFIBRED. |

ພ້ອມດຽວກັນນີ້ ກໍ່ຍັງມີຜູ້ຕາງໜ້າຈາກ: ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ຕະຫຼາດຫຼັກຊັບລາວ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ກວດສອບຜູ້ຖືຮຸ້ນ ທຄຕລ, ພ້ອມດ້ວຍສື່ມວນຊົນຈາກໂທລະພາບ, ໜັງສືພິມ, ວາລະສານ, ແລະ ວິທະຍຸ ກໍ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ຫຼັງຈາກກ່າວເປີດກອງປະຊຸມຢ່າງເປັນທາງການແລ້ວ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ໃນຖານະປະທານກອງປະຊຸມໄດ້ແຈ້ງຕໍ່ຜູ້ຖືຮຸ້ນຮັບຮູ້ລະບຽບກອງປະຊຸມ, ວິທີການລົງຄະແນນສຽງ ມີເນື້ອໃນຫຍໍ້ດັ່ງນີ້:

– ການລົງຄະແນນສຽງ: ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ທີ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມຮຽບຮ້ອຍແລ້ວ ເທົ່ານັ້ນ ທີ່ຈະມີສິດລົງຄະແນນສຽງ.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhgv@bcel.com.la, SWIFT Code: COEBLALA

- ປະທານກອງປະຊຸມ ຈະເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍຈະເຊີນ ພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການ ສະເໜີດັ່ງກ່າວ ກໍບໍ່ຈຳເປັນຕ້ອງ ລົງຄະແນນສຽງ)ແລະ ກ່ອນລົງຄະແນນສຽງແຕ່ລະວາລະ ປະທານຈະເປີດໂອກາດໃຫ້ຜູ້ຖືຮຸ້ນໄດ້ສອບຖາມບັນຫາທີ່ກ່ຽວຂ້ອງກ່ອນ.
- ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.
- ກອງປະຊຸມຈະໄດ້ແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນ ສຽງຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.

ຈາກນັ້ນ, ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ໃນຖານະປະທານກອງປະຊຸມ ປະທານກອງປະຊຸມ ໄດ້ນຳພາກອງປະຊຸມເຂົ້າສູ່ແຕ່ລະວາລະ ໂດຍໃຫ້ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ, ເປັນຜູ້ສະເໜີເນື້ອໃນຕໍ່ກອງປະຊຸມ ຊຶ່ງໄດ້ພິຈາລະນາ, ປະກອບຄຳເຫັນ ແລະ ມີມະຕິໃນແຕ່ລະວາລະດັ່ງນີ້:

**ວາລະທີ 1: ລາຍງານການປະຕິບັດມະຕິກອງປະຊຸມຄັ້ງຜ່ານມາ**.

ທ່ານພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານມະຕິທີ່ກອງປະຊຸມຄັ້ງຜ່ານມາທີ່ໄດ້ເຫັນດີເປັນເອກະພາບຮັບຮອງບັນຫາສຳຄັນເຊັ່ນ:

- ຮັບຮອງຜົນການດຳເນີນທຸລະກິດ ແລະ ຈຳນວນເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2015.
- ຮັບຮອງການປັນຜົນຮຸ້ນ ທຄຕລ ງວດ 02 ປະຈຳ 06 ເດືອນທ້າຍປີ 2015 ຈຳນວນ 219 ກີບ/ຮຸ້ນ.
- ຮັບຮອງແຜນການປະຈຳປີ 2016 ຂອງ ທຄຕລ.
- ຮັບຮອງການປັນຜົນປະຈຳປີ 2016 ເປັນ 1 ງວດ ຕາມກວດສອບພາຍນອກ (ມາດຕະຖານລາວ).
- ຮັບຮອງບໍລິສັດເອີນແອນຢັງລາວຈຳກັດ ເປັນຜູ້ກວດສອບປະຈຳປີ 2016 ຂອງ ທຄຕລ.

ຕໍ່ກັບການຮັບຮອງບັນຫາຕ່າງໆໃນກອງປະຊຸມຄັ້ງຜ່ານມາ ທຄຕລ ກໍ່ໄດ້ປະຕິບັດຕາມການຮັບຮອງດັ່ງກ່າວ.

➢ **ກອງປະຊຸມ ຮັບຊາບການປະຕິບັດມະຕິກອງປະຊຸມຄັ້ງຜ່ານມາ.**

**ວາລະທີ 2: ລາຍງານສະພາບການດຳເນີນງານຂອງ ທຄຕລ ໃນປີ 2016 ໂດຍຫຍໍ້**ໃນແຕ່ລະດ້ານ.

ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

- ໃນປີ 2016 ທຄຕລ ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດຂອງ ທຄຕລ ທົ່ວລະບົບ 04 ຄັ້ງ ແລະ ຈັດກອງປະຊຸມສະພາບໍລິຫານຈຳນວນ 04 ຄັ້ງ.
- ໄດ້ສຳເລັດການຄົ້ນຄວ້າວຽກງານ KPI ຂອງສູນບໍລິການສຳນັກງານໃຫຍ່, KPI ວັດແທກຜົນການດຳເນີນງານຂອງ ສາຂາທົ່ວລະບົບ ປະຈຸບັນຍັງຢູ່ໃນຂັ້ນຕອນພັດທະນາໂປແກຣມ ຊຶ່ງຈະທົດລອງ ແລະ ສາມາດໃຫ້ເລີ້ມປະຕິບັດໃນໄຕມາດ I/2017. ພ້ອມກັນນັ້ນ, ຍັງໄດ້ແຕ່ງຕັ້ງຄະນະຄົ້ນຄວ້າປັບປຸງ Job description ແລະ KPI ພະນັກງານທັງໝົດ ຂອງ ທຄຕລ.

- ສຳເລັດການເຊັນສັນຍາຮ່ວມກັບບໍລິສັດທີ່ປຶກສາ E&Y ໃນການປະເມີນສ່ວນຕ່າງໃນໂຄງການ Basel II ແລະ ດຳເນີນການຄັດເລືອກບໍລິສັດທີ່ປຶກສາໃນໂຄງການເພີ່ມທຶນໃຫ້ ທຄຕລ.
- ສຳເລັດພັດທະນາຜະລິດຕະພັນ BCEL i-Bank version 3 ແລະ BCEL One version 3.
- ສຳເລັດໂດຍພື້ນຖານການພັດທະນາລະບົບຊຳລະສະສາງອອນລາຍ ຂອງບັດເອທີເອັມ BCEL-UnionPay ເພື່ອໃຫ້ສາມາດຊື້ປີ້ຍົນຂອງສາຍການບິນລາວ ຜ່ານ website ຂອງການບິນລາວໄດ້.
- ເປີດບໍລິການຜະລິດຕະພັນ ພັນ Smart VAT ທີ່ຂົວມິດຕະພາບລາວ-ໄທ ແຫ່ງທີ່ 1 (ວຽງຈັນ-ໜອງຄາຍ).
- ຄົ້ນຄວ້າປັບປຸງດອກເບ້ຍເງິນຝາກ, ເງິນກູ້ສະກຸນເງິນບາດ ແລະ ສະກຸນເງິນໂດລາ ໃນລະບົບ 02 ຄັ້ງ.
- ສຳເລັດການເຊັນສັນຍາການຊຳລະສະສາງລະຫວ່າງ ທຄຕລ ແລະ ສະຫະກອນສິນເຊື່ອ ສປ ຈີນ.
- ໃນປີ 2016 ທຄຕລ ໄດ້ຮັບການກວດສອບຈາກພາຍນອກ 03 ພາກສ່ວນເຊັ່ນ: ບໍລິສັດກວດສອບພາຍນອກ E&Y ກວດສອບຖານະການເງິນ ທຄຕລ ປະຈຳປີ 2015 ແລະ ປະຈຳປີ 2016, ກວດສອບຈາກກົມຄຸ້ມຄອງທະນາຄານທຸລະກິດ ທຫລ ແລະ ອົງການກວດສອບແຫ່ງລັດ ທີ່ກວດສອບຖານະການເງິນ ທຄຕລ ປະຈຳປີ 2015.
- ທຄຕລ ໄດ້ຂະຫຍາຍຕາໜ່າງບໍລິການທີ່ໃຫ້ບໍລິການແກ່ສັງຄົມໄດ້ຈຳນວນ 04 ໜ່ວຍບໍລິການຄື: ໜ່ວຍບໍລິການຄູນຄຳ ສາຂາຄຳມ່ວນ, ໜ່ວຍບໍລິການເມືອງປາກແບ່ງ ສາຂາອຸດົມໄຊ, ໜ່ວຍບໍລິການ ຄົບວົງຈອນໄຊສົມບູນ ແລະ ໜ່ວຍບໍລິການຫຼັກ 07 ນະຄອນຫຼວງວຽງຈັນ ທີ່ຂຶ້ນກັບສຳນັກງານໃຫຍ່.

➢ **ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ຊຶ່ງຜູ້ຖືຮຸ້ນໄດ້ມີບາງຄຳເຫັນດັ່ງນີ້:**

❖ ຄຳເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ: ການປະຊຸມເທື່ອກ່ອນມີການບັນທຶກລະອຽດຕໍ່ກັບການສະ ເໜີຂອງຜູ້ຖືຮຸ້ນ ແລະ ເຫັນວ່າໄດ້ມີການປັບປຸງແລ້ວຈຳນວນໜຶ່ງ ແຕ່ກໍ່ຍັງຄ້າງຈຳນວນໜຶ່ງສະ ເໜີປັບປຸງຕື່ມຄື:

- ການສະແດງຍອດຊຳລະບັດວີຊາຂອງ ທຄຕລ ຢູ່ຕ່າງປະເທດ ຍັງບໍ່ສະແດງສະກຸນເງິນທີ່ຕັດຕົ້ນທາງ.
- ການອອກປື້ມເງິນຝາກຫົວໃໝ່ໃຫ້ລູກຄ້າໃນກໍລະນີທີ່ມີທຸລະກຳຫຼາຍ ທຄຕລ ຍັງຕັດບາງລາຍການເຄື່ອນໄຫວອອກໂດຍບໍ່ສະແດງຍອດວົງເງິນທີ່ຕັດລາຍການໄປນັ້ນ.
- ການແກ້ໄຂຂໍ້ຜິດພາດຂອງພະນັກງານ Teller ຕໍ່ລູກຄ້າ, ໃນກໍລະນີທີ່ຕ້ອງສົ່ງເງິນຄືນໃຫ້ລູກຄ້າ ຄວນເປັນເງິນຂອງທະນາຄານຊຳລະໃຫ້ລູກຄ້າກ່ອນ, ຖ້າພະນັກງານຕ້ອງຮັບຜິດຊອບ ທະນາຄານຈຶ່ງແກ້ໄຂກັບພະນັກງານບໍ່ໃຫ້ເປັນເງິນຂອງພະນັກງານທີ່ໂອນສົ່ງໃຫ້ລູກຄ້າໂດຍກົງ.
- ຖ້າທະນາຄານມີການປ່ຽນແປງໝາຍເລກໂທລະສັບພາຍໃນ, ການແຈ້ງລູກຄ້າອາດບໍ່ໄດ້ທົ່ວເຖິງ ແຕ່ຄວນມີລະບົບການໂອນສາຍໃຫ້ລູກຄ້າໄດ້ພົວພັນກັບພາກສ່ວນທີ່ກ່ຽວຂ້ອງ, ກໍລະນີໝາຍເລກໂທລະສັບມີບັນຫາຕ້ອງໃຫ້ບໍລິສັດໂທລະຄົມມາແກ້ໄຂ.
- ການຕັດເງິນຈາກບັນຊີທີ່ອອກເຊັກເງິນສົດ ຕ້ອງຕັດຄັ້ງດຽວບໍ່ຄວນຕັດຫຼາຍຄັ້ງ.

➢ **ທ່ານ ປະທານກອງປະຊຸມ:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH, ເຊິ່ງເປັນຄຳເຫັນທີ່ຕິດພັນກັບວຽກວິຊາສະເພາະ, ມອບໃຫ້ກອງເລຂາບັນທຶກ ແລະ ປະສານກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າປັບປຸງ ເພື່ອໃຫ້ການດຳເນີນງານຂອງ ທຄຕລ ດີຂຶ້ນຕື່ມ.

➢ **ກອງປະຊຸມ ຮັບຊາບຕໍ່ກັບການດຳເນີນງານແຕ່ລະດ້ານຂອງ ທຄຕລ.**

**ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດ 2016**:

➢ ທ່ານພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

ຜົນການດຳເນີນທຸລະກິດປະຈຳປີ 2016 ໄດ້ຮັບການກວດສອບຈາກ ບໍລິສັດເອີນແອນຢັງລາວຈຳກັດ, ຮັບຮອງຈາກສະພາບໍລິຫານ ທຄຕລ:

- ຍອດຊັບສິນ/ໜີ້ສິນ: 32,238.79 ຕື້ກວ່າກີບ
- ຍອດສິນເຊື່ອທັງໝົດ: 19,240.07 ຕື້ກວ່າກີບ
- ຍອດເງິນຝາກທັງໝົດ: 28,188. 71 ຕື້ກວ່າກີບ.
- ກຳໄລກ່ອນອາກອນ: 217.27 ຕື້ກວ່າກີບ,
- ກຳໄລຫຼັງອາກອນ: 167.98 ຕື້ກວ່າກີບ, (ອາກອນກຳໄລ 24%)

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

➢ ກອງປະຊຸມໄດ້ຮັບຮອງເອົາຜົນການດຳເນີນທຸລະກິດ ທຄຕລ ປະຈຳປີ 2016 ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4: ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈຳປີ 2016**

➢ ທ່ານພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

ຫຼັງການຫັກອາກອນກຳໄລ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເງິນປັນຜົນໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປຶ້ມກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ 2016 ໃນວັນທີ 03/04/2017 ມີອັດຕາການປັນຜົນເທົ່າກັບ 614 ກີບ/ຮຸ້ນ. ການຈ່າຍເງິນປັນຜົນໃຫ້ສຳເລັດພາຍໃນ 5 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

➢ ກອງປະຊຸມໄດ້ຮັບຮອງເອົາເງິນປັນຜົນ ທຄຕລ ປະຈຳປີ 2016, ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5: ພິຈາລະນາ ແລະ ຮັບຮອງແຜນການປີ 2017**.

➢ ທ່ານພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

ແຜນການປີ 2017 ຂອງ ທຄຕລ ມີບາງເປົ້າໝາຍການດຳເນີນທຸລະກິດທີ່ສຳຄັນດັ່ງນີ້:

- ຍອດຊັບສິນ: ເພີ່ມຂຶ້ນ 10% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2016,
- ຍອດເງິນຝາກ: ເພີ່ມຂຶ້ນ 5% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2016,

- ຍອດເງິນກູ້:		ເພີ້ມຂຶ້ນ 6% ທຽບໃສ່ຕົວເລກປະຕິບັດໄດ້ໃນປີ 2016,
- ກຳໄລກ່ອນອາກອນ:		250 ຕື້ກີບ,
- ແຜນຮັບພະນັກງານໃໝ່ທົ່ວລະບົບຈຳນວນ 90 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ້ມ 1 ສາຂາ ແລະ 11 ໜ່ວຍບໍລິການໃນທົ່ວປະເທດ.

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນ ແຕ່ກໍບໍ່ມີທ່ານໃດສະແດງຄຳເຫັນໃນວາລະນີ້, ທ່ານປະທານຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

➢ ກອງປະຊຸມໄດ້ຮັບຮອງເອົາແຜນການປີ 2017 ຂອງ ທຄຕລ, ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 6:	ພິຈາລະນາ ແລະ ຮັບຮອງການແບ່ງເງິນປັນຜົນຂອງ ທຄຕລ ໃນປີ 2017 ແລະ ປີຕໍ່ໆໄປ 1 ຄັ້ງ/ປີ.**

➢ ທ່ານພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

ອີງຕາມບົດຮຽນໃນປີຜ່ານມາ ເຫັນວ່າການປັນຜົນ 2 ຄັ້ງຕໍ່ປີມີຄວາມຫຍຸ້ງຍາກໃນການກຳນົດເງິນປັນຜົນທີ່ສົມເຫດສົມຜົນ. ເພື່ອເປັນການຮັກສາຜົນປະໂຫຍດຂອງຜູ້ຖືຮຸ້ນ ແລະ ເພື່ອໃຫ້ສະພາບໍລິຫານຂອງ ທຄຕລ ມີຂໍ້ມູນຄົບຖ້ວນໃນການກຳນົດເງິນປັນຜົນ ຈຶ່ງເຫັນຄວນສະເໜີກອງປະຊຸມພິຈາລະນາຮັບຮອງໃຫ້ ທຄຕລ ແບ່ງເງິນປັນຜົນໃນປີ 2017 ແລະ ປີຕໍ່ໆໄປ 1 ຄັ້ງຕໍ່ປີ ຫຼັງສຳເລັດຜົນກວດສອບຖານະການເງິນປະຈຳປີ ແລະ ຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ.

➢ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນຕໍ່ວາລະນີ້ ຊຶ່ງມີບາງຄຳເຫັນ ດັ່ງນີ້:

❖ ຄຳເຫັນ ຈາກ ທ່ານ KRAIWAL KADAVANICH, ຜູ້ຖືຮຸ້ນຈາກປະເທດໄທ: ການປ່ຽນແປງຈຳນວນຄັ້ງປັນຜົນຈະມີຄວາມສະດວກຂຶ້ນຕໍ່ສະພາບໍລິຫານ ທຄຕລ, ແຕ່ຖ້າມີການປັນຜົນລະຫວ່າງປີ ຜູ້ຖືຮຸ້ນກໍ່ຈະມີຄວາມພໍໃຈຂຶ້ນ. ບໍ່ຄັດຄ້ານຕໍ່ການສະເໜີ ແຕ່ຄວນສະເໜີໃຫ້ອິດສະຫຼະແກ່ຜູ້ຖືຮຸ້ນຕັດສິນໃຈເອງວ່າເຫັນຄວນປັນຜົນຈັກຄັ້ງກໍ່ໄດ້ຕາມຄວາມເໝາະສົມ ເພາະເປັນສິດຜົນປະໂຫຍດຂອງຜູ້ຖືຮຸ້ນ.

➢ ທ່ານປະທານກອງປະຊຸມ ໄດ້ສະເໜີໃຫ້ກອງເລຂາບັນທຶກຄຳເຫັນດັ່ງກ່າວໄວ້. ແລະ ເມື່ອບໍ່ມີຄຳເຫັນອື່ນໃດແລ້ວນັ້ນ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.

➢ ກອງປະຊຸມໄດ້ຮັບຮອງການແບ່ງເງິນປັນຜົນຂອງ ທຄຕລ ໃນປີ 2017 ແລະ ປີຕໍ່ໆໄປ 1 ຄັ້ງ/ປີ ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງຜູ້ກວດສອບ ທຄຕລ ສຳລັບປີ 2017.**

➢ ທ່ານພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

ຕາມການຄົ້ນຄວ້າ, ສົມທຽບເງື່ອນໄຂຕ່າງໆ ແລະ ລາຄາ, ທຄຕລ ໄດ້ເລືອກເອົາບໍລິສັດເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2017, ໃນມູນຄ່າ 93,000 ໂດລາ (ລາຄາເທົ່າກັບການກວດ

ສອບໃນປີ 2015, 2016), ໃນນັ້ນລວມມີການ ກວດສອບ ຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວ-ພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ປະຈຳປີ.

- ທ່ານປະທານກອງປະຊຸມ ໄດ້ສະເໜີຜູ້ຖືຮຸ້ນມີຄຳເຫັນ; ໃນເມື່ອບໍ່ມີຄຳເຫັນໃດໆແລ້ວນັ້ນ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.
- ກອງປະຊຸມເຫັນດີຮັບຮອງເອົາບໍລິສັດເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2017, ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
  - ເຫັນດີຈຳນວນ: 112,620,541 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 8: ພິຈາລະນາ ຮັບຮອງແຜນຍຸດທະສາດໄລຍະຍາວຂອງ ທຄຕລ ນັບແຕ່ປີ 2016-2020:**

- ທ່ານພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ລາຍງານ ຕໍ່ກອງປະຊຸມດັ່ງນີ້:

  ແຜນຍຸດທະສາດສະບັບນີ້ ສຸມໃສ່ການພັດທະນາລະບົບບໍລິຫານອົງກອນ, ປັບປຸງລະບົບບໍລິຫານຄວາມສ່ຽງໃຫ້ມີຄວາມເຂັ້ມແຂງ, ຍົກສູງປະສິດທິພາບການດຳເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານ, ນຳໃຊ້ລະບົບເທັກໂນໂລຊີທີ່ມີຄວາມທັນສະໄໝ ແລະ ສ້າງຄວາມຊ່ຽວຊານສະເພາະດ້ານຂອງບຸກຄະລາກອນ.

- ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳເຫັນຕໍ່ວາລະນີ້ ຊຶ່ງມີບາງຄຳເຫັນ ດັ່ງນີ້:
  - ❖ ຄຳເຫັນ ຈາກ ທ່ານ KRAIWAL KADAVANICH: ໃນແຜນພັດທະນາໄລຍະ 2016-2020, ເນື້ອໃນພາກທີ່ 1 ຄວນແມ່ນການຕີລາຄາການປະຕິບັດງານໄລຍະ 2011- 2016 ແລະ ພາກ 2 ຈຶ່ງເປັນ 2017 ປະຈຸບັນໄປ. ການສະເໜີຮັບຮອງມື້ນີ້ແມ່ນເປັນການຮັບຮອງຄືນການດຳເນີນງານ 2016 ເພື່ອສ້າງເງື່ອນໄຂການປະຕິບັດໃນຕໍ່ໜ້າຮອດ 2020.
  - ❖ ທ່ານ ປອ ບຸນເຫຼືອ ສິນໄຊວໍຣະວົງ: ແຜນໄລຍະຍາວ ທຄຕລ ໄດ້ເລີ້ມຄົ້ນຄວ້າການປັບປຸງແຕ່ຕົ້ນປີ 2016, ຊຶ່ງຕີລາຄາຈາກ 2011-2016. ເນື່ອງຈາກຂັ້ນຕອນການສະເໜີມີຫຼາຍຂັ້ນຕອນ ແລະ ໃຊ້ເວລາ ຈຶ່ງເຮັດໃຫ້ເວລາເລື່ອນໄປ ແລະ ໄດ້ຜ່ານກອງປະຊຸມຮັບຮອງໃນປີ 2017.
  - ❖ ທ່ານ ພູຊົງ ຈັນທະຈັກ, ຜູ້ອຳນວຍການ ທຄຕລ: ໄລຍະຜ່ານມາ ທຄຕລ ເຄີຍສະເໜີຜ່ານກອງປະຊຸມຜູ້ຖືຮຸ້ນຮັບຮອງແຜນໄລຍະຍາວຂອງ ທຄຕລ 2011-2020 ແລ້ວ, ແຕ່ອີງໃສ່ສະພາບເສດຖະກິດຕົວຈິງທີ່ມີການປ່ຽນແປງ ແລະ ເຫັນວ່າແຜນການໄລຍະຍາວທີ່ຂື້ນໄວ້ບໍ່ແທດເໝາະຈຶ່ງໄດ້ມີການຄົ້ນຄວ້າປັບປຸງຄືນໃໝ່ແຕ່ຕົ້ນປີ 2016 ແລະ ຮອດປະຈຸບັນເຫັນວ່າມີຄວາມລະອຽດສົມຄວນ.
- ໃນເມື່ອບໍ່ມີຄຳເຫັນໃດໆອີກແລ້ວນັ້ນ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.
- ກອງປະຊຸມຮັບຮອງການປັບປຸງແຜນຍຸດທະສາດໄລຍະຍາວຂອງ ທຄຕລ ນັບແຕ່ປີ 2016-2020 ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
  - ເຫັນດີຈຳນວນ: 112,615,441 ສຽງ, ເທົ່າກັບ 99.995% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
  - ບໍ່ເຫັນດີຈຳນວນ: 5,100 ສຽງ, ເທົ່າກັບ 0.005 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 9: ພິຈາລະນາຮັບຮອງການຈຳໜ່າຍຮຸ້ນເພີ່ມທຶນ ທຄຕລ.**

- ທ່ານພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີ ຕໍ່ກອງປະຊຸມດັ່ງນີ້:

  ຮູບແບບການອອກຮຸ້ນຄື: ໃຫ້ສິດຜູ້ຖືຮຸ້ນເດີມ (RO) ແລະ ຂາຍອອກສູ່ມວນຊົນ (PO) ໃນນັ້ນໃຫ້ສິດຜູ້ຖືຮຸ້ນເດີມ (RO) ໃນສັດສ່ວນ 2 ຕໍ່ 1 ຮຸ້ນ. ສ່ວນການຈັດຕັ້ງປະຕິບັດຕົວຈິງ ເຊັ່ນ: ການກຳນົດລາຄາທີ່ເໝາະສົມ, ຈຳນວນຮຸ້ນ ລວມທັງ ການປັບປຸງປ່ຽນແປງບັນດາເງື່ອນໄຂໃດໆທີ່ຈຳເປັນຕໍ່ຜົນສຳເລັດການເພີ່ມທຶນຄັ້ງນີ້ ແມ່ນມອບໃຫ້ສະພາບໍລິຫານ ເປັນຜູ້ມີສິດຕັດສິນ ແລະ ດຳເນີນການ.
- ທ່ານປະທານກອງປະຊຸມ ໄດ້ສະເໜີຜູ້ຖືຮຸ້ນມີຄຳເຫັນ; ໃນເມື່ອບໍ່ມີຄຳເຫັນໃດໆແລ້ວນັ້ນ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.
- ກອງປະຊຸມຮັບຮອງການຈຳໜ່າຍຮຸ້ນເພີ່ມທຶນ ຂອງ ທຄຕລ ຕາມການສະເໜີຂອງຄະນະບໍລິຫານ ທຄຕລ ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:
  - ເຫັນດີຈຳນວນ: 112,533,141 ສຽງ, ເທົ່າກັບ 99.922 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
  - ບໍ່ເຫັນດີຈຳນວນ: 87,400 ສຽງ, ເທົ່າກັບ 0.078 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 10: ພິຈາລະນາຮັບຮອງການເພີ່ມອັດຕາສ່ວນຮຸ້ນທີ່ນັກລົງທຶນຕ່າງປະເທດສາມາດຖືຄອງຈາກ 1% ເປັນ 2% ແລະ ຍົກເລີກອັດຕາສ່ວນການຖືຮຸ້ນລວມຂອງຕ່າງປະເທດ 10%.**

- ທ່ານພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ສະເໜີ ຕໍ່ກອງປະຊຸມດັ່ງນີ້:

  ປະຈຸບັນນີ້, ທຄຕລ ໄດ້ຮັບອະນຸມັດຈາກລັດຖະບານກໍ່ຄືກະຊວງການເງິນ ໃຫ້ປະກອບທຶນເພີ່ມ 360 ຕື້ກີບ. ທຄຕລ ໄດ້ຄັດເລືອກເອົາທີ່ປຶກສາດ້ານການເງິນ ເພື່ອອອກຈຳໜ່າຍຮຸ້ນເພີ່ມທຶນດັ່ງກ່າວແລ້ວ. ສະນັ້ນ, ເພື່ອເພີ່ມສະພາບຄ່ອງໃຫ້ແກ່ການຊື້-ຂາຍຮຸ້ນ ແລະ ເຮັດໃຫ້ ທຄຕລ ສາມາດບັນລຸເປົ້າໝາຍການເພີ່ມທຶນ ກອງປະຊຸມສະພາບໍລິຫານໄດ້ຕົກລົງເຫັນດີນຳສະເໜີກອງປະຊຸມຜູ້ຖືຮຸ້ນສາມັນ ປະຈຳປີ 2016 ໃຫ້ພິຈາລະນາຮັບຮອງເອົາການເພີ່ມອັດຕາສ່ວນຮຸ້ນທີ່ນັກລົງທຶນຕ່າງປະເທດຈາກ 1% ເປັນ 2% ຕໍ່ນັກລົງທຶນໜຶ່ງລາຍ ແລະ ຍົກເລີກອັດຕາສ່ວນການຖືຮຸ້ນລວມຂອງຕ່າງປະເທດ 10%, ພ້ອມທັງໃຫ້ນັກລົງທຶນຍ່ອຍທົ່ວໄປສາມາດຊື້ ແລະ ຖືຄອງຮຸ້ນ ທຄຕລ ໄດ້ລາຍລະບໍ່ເກີນ 2%, ນັກລົງທຶນ ແລະ ຂາຮຸ້ນພາຍໃນ ແລະ ຕ່າງປະເທດຖືຄອງຮຸ້ນ ທຄຕລ ລວມກັນໄດ້ບໍ່ເກີນ 20%.
- ທ່ານປະທານກອງປະຊຸມ ໄດ້ສະເໜີຜູ້ຖືຮຸ້ນມີຄຳເຫັນ; ໃນເມື່ອບໍ່ມີຄຳເຫັນໃດໆແລ້ວນັ້ນ ປະທານກອງປະຊຸມ ຈຶ່ງສະເໜີໃຫ້ຜູ້ຖືຮຸ້ນລົງຄະແນນສຽງຮັບຮອງເອົາວາລະດັ່ງກ່າວ.
- ກອງປະຊຸມຮັບຮອງການເພີ່ມອັດຕາສ່ວນຮຸ້ນ ທຄຕລ ທີ່ນັກລົງທຶນຕ່າງປະເທດສາມາດຖືຄອງຈາກ 1% ເປັນ 2% ຕໍ່ນັກລົງທຶນໜຶ່ງລາຍ, ຍົກເລີກອັດຕາສ່ວນການຖືຮຸ້ນລວມຂອງຕ່າງປະເທດ 10%, ນັກລົງທຶນຍ່ອຍທົ່ວໄປສາມາດຖືຄອງຮຸ້ນ ທຄຕລ ໄດ້ບໍ່ເກີນ 2% ຕໍ່ນັກລົງທຶນໜຶ່ງລາຍ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ ສາມາດຖືຄອງຮຸ້ນ ທຄຕລ ໃນຕະຫຼາດຫຼັກຊັບລາວ ລວມກັນໄດ້ບໍ່ເກີນ 20% ຂອງຮຸ້ນ ທຄຕລ ທັງໝົດ. ດ້ວຍຄະແນນສຽງຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 112,553,041 ສຽງ, ເທົ່າກັບ 99.94 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 67,500 ສຽງ, ເທົ່າກັບ 0.06% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຈາກນັ້ນ, ທ່ານປະທານກອງປະຊຸມ ໄດ້ແຈ້ງໃຫ້ຜູ້ຖືຮຸ້ນ ຊາບວ່າ ກອງປະຊຸມໄດ້ດຳເນີນຄົບຖ້ວນທຸກວາລະກອງປະຊຸມ ດັ່ງທີ່ໄດ້ກຳນົດໄວ້ໃນໜັງສືແຈ້ງເຊີນແລ້ວ ແລະ ໄດ້ສະເໜີໃຫ້ຜູ້ຖືຮຸ້ນປະກອບຄຳເຫັນອື່ນໆຕໍ່ການດຳເນີນງານຂອງ ທຄຕລ ຊຶ່ງຜູ້ຖືຮຸ້ນ ໄດ້ມີບາງຄຳເຫັນດັ່ງນີ້:

❖ **ຄຳເຫັນເພີ້ມເຕີມຂອງຜູ້ຖືຮຸ້ນ ຕໍ່ ທຄຕລ**:

1. ***ທ່ານ ເທບສະຫວັນ***: ເພື່ອກະຕຸ້ນການເໜັງຕີງຂອງລາຄາຮຸ້ນ ທຄຕລ ກ່ອນມື້ປິດປຶ້ມ ທຄຕລ ຄວນແຈ້ງຈຳນວນເງິນປັນຜົນກ່ອນ, ສະເໜີໃຫ້ ທຄຕລ ແຈ້ງກ່ອນໃນປີຕໍ່ໄປ.

➢ **ຄຳຕອບຈາກ *ທ່ານ ພູຂຽງ ຈັນທະຈັກ*, ຜູ້ອຳນວຍການ *ທຄຕລ***: ທຄຕລ ກໍ່ມີຄວາມຕັ້ງໃຈປະຕິບັດການແຈ້ງເງິນປັນຜົນກ່ອນມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ແຕ່ຍ້ອນການກວດສອບບໍ່ສຳເລັດຢ່າງເປັນທາງການ, ເພື່ອປະຕິບັດຕາມຂັ້ນຕອນ, ຕາມລະບຽບ ຈຶ່ງບໍ່ສາມາດປະຕິບັດໄດ້ໃນປີນີ້, ໃນປີຕໍ່ໄປຈະພະຍາຍາມແຈ້ງລ່ວງໜ້າ.

2. **ຄຳເຫັນຈາກຜູ້ຖືຮຸ້ນທີ່ບໍ່ໄດ້ລະບຸຊື່**:
   - ການເພີ້ມພະນັກງານມີຄວາມຈຳເປັນແນວໃດຕໍ່ການພັດທະນາທຸລະກິດ ເພາະຕິດພັນກັບການເພີ້ມລາຍຈ່າຍ, ເງິນກຳໄລອາດຈະຫລຸດ ແລະ ເງິນປັນຜົນກໍ່ຫລຸດລົງໄປຕາມກັນ.
   - ການຂາຍຮຸ້ນເພີ້ມທຶນຜ່ານມາເຫັນຫຼາຍມາແລ້ວ, ກຳໄລຄາດກະ 250 ຕື້ກີບ, ແຕ່ການເພີ້ມຮຸ້ນ ເງິນປັນຜົນກໍ່ອາດຈະລຸດລົງ.

➢ **ຄຳຕອບຈາກ *ທ່ານ ພູຂຽງ ຈັນທະຈັກ***:
   - ໂດຍລວມ ເປົ້າໝາຍການບໍລິຫານງານຂອງ ທຄຕລ ເນັ້ນປະສິດທິຜົນ. ການເພີ້ມຈຳນວນພະນັກງານ ແມ່ນອີງໃສ່ຜົນການດຳເນີນງານ, ການຂະຫຍາຍທຸລະກິດ ການລະດົມທຶນເພີ້ມຂຶ້ນ, ຄວາມຈຳເປັນໃນການຂະຫຍາຍທຸລະກິດກໍ່ແມ່ນຄຽງຄູ່ກັບການເພີ້ມພະນັກງານ. ເຖິງວ່າ ທຄຕລ ໄດ້ພັດທະນາບັນດາເຄື່ອງມື ແລະ ບໍລິການທີ່ທັນສະໄໝ ແຕ່ກໍ່ຍັງຈຳເປັນຕ້ອງມີບຸກຄະລາກອນຮັບໃຊ້ວຽກງານບໍລິການຢູ່ ຊຶ່ງ ທຄຕລ ກໍ່ໄດ້ພະຍາຍາມນຳໃຊ້ພະນັກງານຢ່າງມີປະສິດທິຜົນ.
   - ຕໍ່ກັບການຈຳໜ່າຍຮຸ້ນເພີ້ມທຶນ, ຈາກມື້ເລີ້ມຕົ້ນຈົດທະບຽນເຂົ້າຕະຫຼາດຫຼັກຊັບ ທຶນຂອງ ທຄຕລ ມີຄວາມພຽງພໍ ແຕ່ຕົວຈິງໃນການດຳເນີນງານໄລຍະຜ່ານມາ ທຄຕລ ມີການຂະຫຍາຍທຸລະກິດເພີ້ມຂຶ້ນ ແຕ່ທຶນບໍ່ເພີ້ມ , ອີງຕາມລະບຽບການດຳເນີນງານ ແລະ ເພື່ອຮອງຮັບການຂະຫຍາຍຕົວໃນອະນາຄົດ ທຄຕລ ຈຶ່ງມີຄວາມຈຳເປັນໃນການເພີ້ມທຶນຂຶ້ນຕື່ມ. ການເພີ້ມທຶນອາດຈະມີຜົນກະທົບຕໍ່ຈຳນວນເງິນປັນຜົນໃນປີທຳອິດ ແຕ່ໄລຍະຍາວ ເມື່ອເຮົາມີທຶນຫຼາຍຂຶ້ນກໍ່ຈະສາມາດລົງທຶນໄດ້ຫຼາຍຂຶ້ນ ແລະ ກຳໄລກໍ່ຈະເພີ້ມຂຶ້ນເຊັ່ນກັນ.

➢ ***ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ:*** ການເພີ້ມພະນັກງານແມ່ນອີງຕາມການຂະຫຍາຍຕົວ ການເພີ້ມລາຍຈ່າຍກໍຄຽງຄູ່ກັບການສ້າງລາຍຮັບ ແລະ ເພີ້ມກຳໄລ.

- ການເພີ່ມທຶນແມ່ນເພື່ອໃຫ້ທະນາຄານມີຄວາມພຽງພໍຂອງທຶນຄົບຕາມອັດຕາສ່ວນທີ່ກຳນົດ ເປັນການສ້າງຄວາມຂັ້ມແຂງໃຫ້ ທຄຕລ ມີຄວາມສາມາດໃນການຂະຫຍາຍທຸລະກິດຫຼາຍຂື້ນ ມີຜົນດີໃນໄລຍະກາງ-ຍາວ.

ເມື່ອບໍ່ມີຄຳຖາມ ຫຼື ຄຳເຫັນອື່ນໃດອີກແລ້ວ, ທ່ານປະທານກອງປະຊຸມ ໄດ້ແຈ້ງໃຫ້ຕາງໜ້າກອງເລຂາ ຂຶ້ນອ່ານຮ່າງມະຕິຂອງກອງປະຊຸມ ໂດຍແມ່ນທ່ານ ທິນເພັດ ຈັນທະລັງສີ, ຫົວໜ້າພະແນກບໍລິຫານທຶນ ແລະ ບໍລິການຕ່າງປະເທດ ທຄຕລ, ໄດ້ຂຶ້ນອ່ານຮ່າງມະຕິດັ່ງກ່າວ.

ຫຼັງຈາກຕາງໜ້າກອງເລຂາອ່ານຮ່າງມະຕິຂອງກອງປະຊຸມແລ້ວ, ທ່ານປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນປະກອບຄຳເຫັນຕໍ່ຮ່າງມະຕິກອງປະຊຸມ ຊຶ່ງຜູ້ຖືຮຸ້ນ ໄດ້ມີບາງຄຳເຫັນດັ່ງນີ້:

- **ທ່ານ KRAIWAL KADAVANICH:** ການສະຫຼຸບມະຕິກອງປະຊຸມຂອງກອງເລຂາ ຄວນສະແດງຜົນການລົງຄະແນນຂອງແຕ່ລະວາລະໄປພ້ອມ.
- **ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ:** ເຫັນດີຕາມການແນະນຳ, ມອບໃຫ້ຄະນະກະກຽມກອງປະຊຸມພິຈາລະນາ ແລະ ປັບປຸງໃນກອງປະຊຸມຄັ້ງຕໍ່ໄປ.

ເມື່ອເຫັນວ່າບໍ່ມີຄຳເຫັນໃດໆອີກຕໍ່ໄປແລ້ວ, ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານກອງປະຊຸມ, ໄດ້ກ່າວປິດກອງປະຊຸມໃນເວລາ 15:45 ໂມງ ຂອງວັນດຽວກັນ.

ເຊັນແທນ **ປະທານກອງປະຊຸມ**

ຄຳສຸກ ສູນດາລາ
ຮອງປະທານສະພາບໍລິຫານ

**ຜູ້ບັນທຶກ**

ສອນນາລິນ ແສງມະນີ